ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໗໕/ປພຖຂ/໑໑໔ຖ໐ລ**

# ຖແລງການ

## ສນັບສນູນແຜນການແປງເຮືອນ ຂອງ

## ທ່ານ Jimmy & Rosalynn Carter ຢູ່ລາວ.

ພວກເຮົາປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ໄດ້ອອກຖແລງການສບັບນີ້ ເພື່ອສນັບສນູນ ໂຄງການສ້າງບ້ານເຮືອນ ໃຫ້ຄົນທຸກຈົນ ປະຈຳປີ ທີ 26th. ຂອງທ່ານ Jimmy ແລະພັລຍາ, ຍານາງ Rosalynn Carter ຢູ່ 5 ປະເທດ ໃນພາກພື້ນເອເຊັຽ ຕາມບໍຣິເວນນ້ຳຂອງໄຫລຜ່ານ, ອັນມີ ປະເທດໄທຽ, ວຽດນາມ, ຈີນ, ຂເມນ ແລະ ລາວ.

ພຽງແຕ່ 5 ວັນເທົ່ານັ້ນເອງ... ໜ່ວຍອາສາສມັກ ຈາກທົ່ວໂລກ, ເກືອບເຖິງ 3,000 ຄົນ ກໍສາມາດ ປຸກເຮືອນໃໝ່, ສ້ອມແປງເຮືອນເກົ່າ ໄດ້ສຳເຣັດ ຢ່າງຈົບງາມ ເຖິງ 166 ຫລັງຄາເຮືອນ.

ສຳລັບຢູ່ລາວ, ໜ່ວຍອາສາສມັກ, ໄດ້ສ້ອມແປງເຮືອນ ສຳເຣັດ 11 ຫລັງ ຢູ່ບ້ານ ຈັນສວ່າງ ແຂວງ ກຳແພງນະຄອນວຽງຈັນ. ບ້ານນີ້, ຕັ້ງຂຶ້ນມາຕັ້ງແຕ່ປີ 2001, ໃກ້ສະຖານີຣົດເມ, ຖືກໄຟໄໝ້ມາກ່ອນແລ້ວ, ບ້ານເຮືອນຣົກເຮື້ອ ເພພັງ; ຊາວບ້ານຄ້າຂາຍແລະເປັນກັມກອນຫາລ້ຽງຊີບ. ເຈົ້າຂອງບ້ານເຮືອນ ມີຄວາມດີໃຈຫລາຍ ເມື່ອໄດ້ພົບປະສັງສັນ ເຮັດວຽກຮ່ວມກັນ ກັບໜ່ວຍອາສາສມັກ ແບບເພື່ອນມິຕສນິດສນົມ. ພວກເຂົາດີໃຈແລະຂອບໃຈນຳທຸກໆຄົນ ທີ່ຊ່ວຍດັດແປງເຮືອນຂອງພວກເຂົາ ໃຫ້ເປັນເຮືອນໃໝ່ ເໝາະສົມ, ອອກແບບຈົບງາມ, ມີຄວາມສດວກສບາຍໃນການໃຊ້ນ້ຳ ແລະມີສ້ວມຖ່າຍ ທີ່ຖືກຫລັກອະນາມັຍ. ເຈົ້າຂອງເຮືອນທຸກໆຄົນ ມີຄວາມຍິ້ມແຍ້ມແຈ່ມໃສ ໃນເວລາເຮັດວຽກ

ຮ່ວມກັບໜ່ວຍອາສາສມັກນັ້ນ, ຄ້າຍກັບ ວ່າ ພວກເຂົາໄດ້ໄດ້ພົບກັບຊີວິດໃໝ່ ທີ່ສົດໃສ ເຕັມໄປດ້ວຍຄວາມມີອິສຣະພາບແລະມີນ້ຳໃຈຕໍ່ກັນ, ຊຶ່ງພວກເຂົາ ບໍ່ເຄີຍໄດ້ພົບເຫັນມາກ່ອນເລີຍ ຢູ່ພາຍໃຕ້ອຳນາດຜະເດັດການ.

ທ່ານ Jimmy Carter ເປັນອະດີດປະທານາທິບໍດີສະຫະຣັດອະເມຣິກາ ຄົນທີ 39th. ເປັນປະທານາທິບໍດີ ທີ່ສນັບສນູນ ໃຫ້ມີຣັຖບານ ເປັນຂອງປະຊາຊົນຢ່າງແທ້ຈິງ, ຈະເປັນຣັຖບານ ຄອມມິວນິສ ກໍຕາມ... ຖ້າເປັນຣັຖບານຮັບໃຊ້ປະຊາຊົນຢ່າງແທ້ຈິງ, ທ່ານກໍສນັບສນູນໃຫ້ການຊ່ວຍເຫລືອ. ຕຣົງກັນຂ້າມ, ຈະເປັນຣັຖບານປະເທດເສຣີກໍຕາມ... ຖ້າຫາກບໍ່ຮັບໃຊ້ຜົນປໂຍດ ຂອງປະຊາຊົນແລ້ວ, ທ່ານກໍບໍ່ເຫັນດີໃຫ້ການຊ່ວຍເຫລືອ ແລະທ່ານກໍໄດ້ຮັບຣາງວັນໂນແບລ໌ ສັນຕິພາບອີກດ້ວຍ.

ການທີ່ທ່ານນຳເອົາໜ່ວຍອາສາສມັກ ເຂົ້າມາຊ່ວຍສ້ອມແປງບ້ານເຮືອນໃຫ້ປະຊາຊົນລາວເປັນໜ້າຢູ່, ສະອາດງາມຕາ, ຖືກຫລັກອະນາໄມດັ່ງນີ້, ມັນມີຄວາມໝາຍສຳຄັນຢ່າງຍິ່ງສຳລັບປະເທດລາວ ທີ່ມີປະຊາຊົນ ປະມານ 6.5 ລ້ານຄົນ80% ເປັນພື້ນທີ່ຊົນະບົດ. ປະຊາຊົນເປັນຊາວກະສິກອນ ຄຸນນະພາບຊີວິດຕ່ຳ, ທຸກຍາກລ້າຫລັງ, ຣາຍໄດ້ສເລັ່ຽ ບໍ່ເຖິງ $2 ສະຫະຣັດຕໍ່ວັນ. ເດັກນ້ອຍບໍ່ໄດ້ເຂົ້າໂຮງຮຽນ, ບໍ່ມີຢາປົວພຍາດ, ເປັນໂຣກຂາດອາຫານ...ຕາຍກ່ອນອາຍຸ 5 ຂວບເຖິງ 40% ປະຊາຊົນຖືກຕັດສິດ ເສຣີພາບທຸກຢ່າງ, ມີຊີວິດການເປັນຢູ່ຢ່າງໜ້າສັງເວດ, ໂສກເສົ້າງ່ວມເຫງົາ ຢູ່ຕລອດເວລາ, ຍ້ອນມີຣັຖບານຜະເດັດການ, ຂາດຄຸນທັມ, ຂາດອາຣິຍະທັມ.

ສນັ້ນ, ການທີ່ທ່ານອະດີດປະທານາທິບໍດີ ໄດ້ນຳເອົາໜ່ວຍອາສາສມັກ ເຂົ້າມາສ້ອມແປງ ບ້ານເຮືອນ, ມັນໄດ້ກາຍເປັນບົດຮຽນ ອັນລ້ຳຄ່າສຳລັບຊາດລາວ ຄົນລາວ, ເພາະມັນເປັນຕົ້ນແບບ ໃນການພັທນາແນວຄິດສາກົນກັມຊົນ, ມັນເປັນຕົ້ນແບບ ໃນການພັທນາປະຊາທິປະໄຕ ແລະມັນເປັນ ຕົ້ນແບບ ໃນການພັທນາຄົນ ໃຫ້ເປັນພົລເມືອງດີຢູ່ໃນໂລກ ທີ່ບໍ່ມີພົມແດນອັນນີ້.

ໂຄງການບຸກເຮືອນ ໃຫ້ຄົນທຸກຍາກ ຂອງທ່ານອະດີດ ປະທານາທິບໍດີ Jimmy ແລະພັລຍາ ນາງ Rosalynn Carter ນີ້, ມັນໄດ້ສ້າງຄວາມປະທັບໃຈ ໃຫ້ແກ່ພວກເຮົາ ປະຊາຊົນພັກ ແລະກຳລັງທັບ ເສຣີປະຊາທິປະໄຕລາວ ກໍຄື ປະຊາຊົນລາວທັງຊາດ ເປັນຢ່າງຍິ່ງ. ພວກເຂົາ ໄດ້ຮຽນຮູ້ ເຖິງນ້ຳໃຈມິຕພາບສາກົນກັມຊົບຢ່າງແທ້ຈິງ, ຈາກການອອກແຮງງານ ໃຫ້ມີແບບແຜນຄັກແນ່, ທຸກຄົນທຳງານດ້ວຍຄວາມມ່ວນຊື່ນ ຫ້າວຫັນ,ຊ່ວຍເຫລືອກັນ ຄົນລະໄມ້ລະມື, ດ້ວຍຄວາມຮັບຜິດຊອບ ສູງ; ເຮັດໃຫ້ວຽກງານນັ້ນ ສຳເຣັດລົງຢ່າງຈົບງາມ ຕາມຣະດັບຄາດໝາຍ...ຊຶ່ງມັນຕຣົງກັນຂ້າມກັບ ທີ່ພັກຣັດເຄີຍບອກສອນວ່າ :ຄົນຢູ່ປະເທດເສຣີນັ້ນ ບໍ່ຮູ້ອອກແຮງງານ...ມີແຕ່ຫລິ້ນກິນຟຸມເຟືອຍ; ພັກຣັດໄດ້ຂນານນາມວ່າ "ພວກເສຣີບີຣ໌ອ" ອັນນີ້,ບໍ່ມີຄວາມຈິງ ຈັກດີ້ເລີຍ!...

ເຖິງຢ່າງໃດກໍຕາມ, ໂຄງການບຸກເຮືອນໃຫ້ຄົນທຸກຍາກ ຫລືບຸກເຮືອນ ເພື່ອມະນຸສທັມນີ້, ນອກຈາກເປັນຕົ້ນແບບ ໃນການພັທນາປະເທດ ຂອງຣັຖບານ ທີ່ມາຈາກປະຊາຊົນ ເພື່ອຜົນປໂຍດ ຂອງປະຊາຊົນ ຢ່າງແທ້ຈິງແລ້ວ, ມັນຍັງບົ່ງບອກ ເຖິງທິດທາງໃໝ່ ໃນການພັທນາຊາດ, ພັທນາເສຖກິດ, ສັງຄົມ ວັທນະທັມ ຂອງເສຣີປະຊາທິປະໄຕ ທີ່ໄດ້ຮັບການພັທນາເປັນຢ່າງດີມາແລ້ວຕື່ມອີກ.

ນອກຈາກນີ້, ກໍຍັງເປັນການສົ່ງສັນຍານ ເຕືອນພັກລັດ ສປປລາວ. ທີ່ສະຫະລັດອະເມຣິກາ ໄດ້ປະກາດຍົກເລີກ ຈາກການເປັນປະເທດ Marxist Leninist ມາແລ້ວນັ້ນ, ໃຫ້ທົບທວນຄືນໃໝ່ ເຖິງບົດບາດຂອງລັຖບານ ທີ່ຕ້ອງແກ້ໄຂຄວາມທຸກຍາກ ຂອງປະຊາຊົນ "ເຂົ້າຂາດແລງ ແກງຂາດໝໍ້" ແທນທີ່ຈະໄປ ທະເຍີທະຍານ, ສ້າງເມືອງລາວ ໃຫ້ເປັນໝໍ້ໄຟ ໃນພູມີພາກນີ້,ຊຶ່ງມີແຕ່ຄວາມເດືອດຮ້ອນ ແລະຄວາມເສັຽຫາຍ ມາສູ່ຊາດແລະປະຊາຊົນເທົ້ານັ້ນເອງ.

ພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ, ກໍຄື ປະຊາຊົນລາວທັງຊາດ, ຂໍສແດງຄວາມຂອບອົກຂອບໃຈ ນຳທ່ານອະດີດປະທານາທິບໍດີ ແລະພັລຍາ ຕລອດຮອດອາສາສມັກ ທຸກໆທ່ານ ທີ່ໄດ້ເສັຽສລະເວລາອັນມີຄ່າ ຂອງບັນດາທ່ານ ເພື່ອມາຊ່ວຍຍົກຣະດັບ ຊີວິດການເປັນຢູ່ ຂອງຄົນລາວ ໃຫ້ດີຂື້ນກວ່າເດີມ. ພ້ອມດຽວກັນນີ້, ກໍຂໍໃຫ້ໂຄງການ ສ້າງບ້ານເຮືອນ ໃຫ້ຄົນທຸກຍາກ ຂອງທ່ານ ຈົ່ງໄດ້ຮັບການສນັບສນູນອູ້ມຊູຈາກປະຊາກອນໂລກ ນັບວັນນັບຫລາຍຂື້ນແລະຂໍໃຫ້ພົບກັບ ຄວາມສຳເຣັດ ຕາມຄວາມມຸ້ງມາດປາຖນາ ຂອງທ່ານ ທຸກປະການດ້ວຍເທີ້ນ

**ຂໍຂອບໃຈ.**

**ສູນກາງຕາງໜ້າ**
**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**
**ຫ້ອງການປະທານພັກ**
**ອາຈານ ສົມນຶກ ຟອງສູວັນ**
**ວັນທີ ໒໗ ພຶສຈິກາ ໒໐໐໙.**